ການລາຍງານຂອງພະແນກກວດສອບບັນຊີຂອງສາສນາຈັກ, ປີ 2010
ສະເໜີໂດຍ ຣໍເບີດ ດັບເບີນຢູ ແຄນແວວ
ຫົວໜ້າຜູ້ຈັດການ, ພະແນກກວດສອບບັນຊີຂອງສາສນາຈັກ

ຮຽນຝ່າຍປະທານສູງສຸດຂອງສາສນາຈັກຂອງພະເຢຊູຄຣິດແຫ່ງໄພ່ພົນຍຸກສຸດທ້າຍ

ຮຽນ ເຈົ້າໜ້າທີ່ຊັ້ນຜູ້ໃຫຍ່

ດັ່ງທີ່ອະທິບາຍໄວ້ໂດຍການເປີດເຜີຍໃນພາກທີ 120 ຂອງຄຳສອນ ແລະ ພັນທະສັນຍາ, ສະພາຈັດການເລື່ອງເງິນສ່ວນສິບ ມີອຳນາດໃນການໃຊ້ຈ່າຍເງິນທຶນຂອງສາສນາຈັກ. ສະພາປະກອບດ້ວຍຝ່າຍປະທານສູງສຸດ, ກຸ່ມອັກຄະສາວົກສິບສອງ, ແລະ ຝ່າຍອະທິການຄວບຄຸມ.

ສະພານຈະກຳນົດເງິນທຶນໃຫ້ພະແນກຕ່າງໆຂອງສາສນາຈັກ ແລະ ການດຳເນີນງານ. ພະແນກຕ່າງໆຂອງສາສນາຈັກຈະອະນຸມັດການງົບປະມານສຳລັບການໃຊ້ຈ່າຍ ຕາມນະໂຍບາຍ ແລະ ລະບຽບປະຕິບັດການຂອງສາສນາຈັກ.

ພະແນກກວດສອບບັນຊີຂອງສາສນາຈັກໄດ້ຮັບອະນຸຍາດໃຫ້ກວດສອບບັນທຶກທຸກຢ່າງທີ່ຈຳເປັນເພື່ອປະເມີນການຄວບຄຸມລາຍໄດ້ ແລະ ລາຍຈ່າຍຂອງເງິນທຶນ ແລະ ປົກປ້ອງດູແລຊັບສິນຂອງສາສນາຈັກ. ພະແນກກວດສອບບັນຊີເປັນໜ່ວຍທີ່ທຳງານຢ່າງອິດສະລະ ໂດຍບໍ່ຂຶ້ນຢູ່ກັບພະແນກ ຫລື ໜ່ວຍງານໃດຂອງສາສນາຈັກ. ພະແນກກວດສອບບັນຊີປະກອບດ້ວຍນັກບັນຊີເອກກະຊົນ ທີ່ມີໃບອະນຸຍາດ. ຜູ້ກວດສອບບັນຊີພາຍໃນທີ່ມີໃບອະນຸຍາດ, ຜູ້ກວດສອບຂໍ້ມູນທີ່ມີໃບອະນຸຍາດແລະ ເຈົ້າໜ້າທີ່ອື່ນໆລະດັບມືອາຊີບ.

ຕາມການດຳເນີນງານການກວດສອບ, ພະແນກກວດສອບບັນຊີລົງຄວາມເຫັນວ່າ ລາຍໄດ້ ແລະ ລາຍຈ່າຍເງິນບໍລິຈາກ ແລະ ການໃຊ້ຊັບສິນຂອງສາສນາຈັກ ລະຫວ່າງປີ 2010 ໄດ້ຮັບການຈັດການ ແລະ ບັນທຶກຕາມແນວທາງທີ່ປະຕິບັດຕາມລະບົບບັນຊີ ທີ່ໄດ້ຮັບອະນຸມັດ ແລະ ຕາມນະໂຍບາຍ ແລະ ລະບຽບປະຕິບັດທີ່ສາສນາຈັກກຳນົດໄວ້ທຸກປະການ.

ດ້ວຍຄວາມນັບຖືເປັນຢ່າງສູງ,

ພະແນກກວດສອບບັນຊີຂອງສາສນາຈັກ

ນໍເບີດ ດັບເບີນຢູ ແຄນແວວ
ຫົວໜ້າຜູ້ຈັດການ